**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ຫ້ອງການ

ເລກທີ 1167 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 12ພຶດສະພາ2022

# ແຈ້ງການ

**ເຖິງ:** - ກົມພາສີ, ພາສີປະຈຳແຂວງ ຫຼວງນ້ຳທາ, ດ່ານພາສີສາກົນບໍ່ເຕັນ;

- ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ;
- ບັນດາບໍລິສັດນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງທຸກໆປະເພດ.

**ເລື່ອງ:** ການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window) ເຂົ້າສູ່ການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງທຸກໆປະເພດ ຢູ່ທີ່ດ່ານພາສີສາກົນ ບໍ່ເຕັນ ເລີ່ມວັນທີ 23 ພຶດສະພາ 2022.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມ ບົດແນະນຳຂອງກະຊວງການເງິນ ວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ສະບັບເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019;
- ອີງຕາມ ຄຳແນະນຳເພີ່ມເຕີມຂອງກົມພາສີ ວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ສະບັບເລກທີ 04145/ກພສ, ລົງວັນທີ 23 ພຶດສະພາ 2019;
- ອີງຕາມ ໜັງສືສະເໜີຂອງກົມພາສີ ສະບັບເລກທີ 02441/ກພສ, ລົງວັນທີ 04 ພຶດສະພາ 2022.

ຫ້ອງການ ກະຊວງການເງິນ ຂໍແຈ້ງມາຍັງທຸກພາກສ່ວນຊາບ ເພື່ອເປັນການຫັນວຽກງານພາສີເປັນທັນສະໄໝ, ລວມສູນ, ຮັບປະກັນປະສິດທິຜົນ ແລະ ຄວາມຄ່ອງຕົວ ໃນການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຢູ່ດ່ານພາສີສາກົນບໍ່ເຕັນ, ແຂວງຫຼວງນ້ຳທາ ເຂົ້າໃນການຄຸ້ມຄອງການນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງທຸກປະເພດ. ສະນັ້ນ, ຈຶ່ງໃຫ້ທຸກພາກສ່ວນຈັດຕັ້ງປະຕິບັດດັ່ງລຸ່ມນີ້:

1. ໃຫ້ນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window "LNSW") ໃນການຄຸ້ມຄອງການນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ທຸກໆປະເພດ ຜ່ານດ່ານພາສີສາກົນ ບໍ່ເຕັນ (ລວມທັງສິນຄ້າປະເພດຍົກເວັ້ນ ຫຼື ງົດເກັບພາສີ);
2. ໃຫ້ບັນດາຜູ້ປະກອບການທັງໝົດ ທີ່ນຳເຂົ້າ-ສົ່ງອອກ ທຸກໆປະເພດສິນຄ້າ, ເຄື່ອງຂອງ ຊຳລະຄ່າພາສີ, ອາກອນ ແລະ ພັນທະອື່ນໆ ພ້ອມທັງຄ່າທຳນຽມ ແລະ ຄ່າບໍລິການ ຂອງຂະແໜງການກ່ຽວຂ້ອງ ແບບລວມສູນ ຜ່ານໜ່ວຍບໍລິການ ຫຼື ລະບົບເອເລັກໂຕຣນິກ ຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ທະນາຄານພັດທະນາ

CamScanner

ລາວ ເຊັ່ນ: ລະບົບ Smart tax, i-Banking, BCEL One Corportate Banking, ເງິນໂອນ ແລະ ເງິນແຊັກ ຕາມລະບຽບການທີ່ກ່ຽວຂ້ອງ.

3. ໃຫ້ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຈັດເກັບຄ່າບໍລິການນຳໃຊ້ລະບົບດັ່ງກ່າວ ໃນອັດຕາ 120,000 (ໜຶ່ງແສນຊາວພັນກີບ) ຕໍ່ການແຈ້ງພາສີເປັນລາຍລະອຽດ 1 ຊຸດ, ຕາມທີ່ກຳນົດໄວ້ໃນສັນຍາສຳປະທານໂຄງການ ຊຶ່ງບໍ່ລວມເອົາຄ່າພາສີ, ຄ່າອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການທີ່ກ່ຽວຂ້ອງ.
4. ສຳລັບຜູ້ປະກອບການ ທີ່ຍັງບໍ່ທັນໄດ້ລົງທະບຽນ ແລະ ຝຶກອົບຮົມການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດນັ້ນ, ແມ່ນໃຫ້ຊຸ່ມຊ່ຽວດຳເນີນຂັ້ນຕອນການລົງທະບຽນ, ອອກລະຫັດຜູ້ນຳໃຊ້ໂດຍດ່ວນ ກ່ອນວັນທີ 22 ພຶດສະພາ 2022. ຈາກນັ້ນນັບແຕ່ວັນທີ 23 ພຶດສະພາ 2022 ເປັນຕົ້ນໄປ ການນຳເຂົ້າ-ສົ່ງອອກ ທຸກໆປະເພດສິນຄ້າ ແລະ ທຸກໆບໍລິສັດ (ລວມທັງສິນຄ້າປະເພດຍົກເວັ້ນ ຫຼື ງົດເກັບພາສີ) ທີ່ຜ່ານດ່ານພາສີສາກົນ ບໍ່ເຕັນ ຕ້ອງດຳເນີນການແຈ້ງພາສີເປັນລາຍລະອຽດ ຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດທັງໝົດ.
5. ມອບໃຫ້ກົມພາສີ, ພາສີປະຈຳແຂວງຫຼວງນໍ້າທາ, ດ່ານພາສີສາກົນ ບໍ່ເຕັນ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ, ບັນດາບໍລິສັດນຳເຂົ້າທຸກໆປະເພດສິນຄ້າ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ໃຫ້ສຳເລັດຕາມລະດັບຄາດໝາຍ.
6. ໃນການຈັດຕັ້ງປະຕິບັດຕົວຈິງຖ້າພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານກົມພາສີ, ເພື່ອມີວິທີການແກ້ໄຂໃຫ້ທັນສະພາບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ຄົມບູນ ອິນທະປັດຖາ

**ບ່ອນສົ່ງ:**

1. ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ — 1 ສະບັບ ຕາງລາຍງານ;
2. ກະຊວງອຸດສາຫະກຳ ແລະ ການຄ້າ — 1 ສະບັບ ຕາງລາຍງານ;
3. ກະຊວງໂຍທາທິການ ແລະ ຂົນສົ່ງ — 1 ສະບັບ ຕາງລາຍງານ;
4. ກະຊວງສາທາລະນະສຸກ — 1 ສະບັບ ຕາງລາຍງານ;
5. ກະຊວງກະສິກຳ ແລະ ປ່າໄມ້ — 1 ສະບັບ ຕາງລາຍງານ;
6. ຫ້ອງການກະຊວງການເງິນ — 1 ສະບັບ ເພື່ອສຳເນົາ;
7. ກົມພາສີ, ກະຊວງການເງິນ — 1 ສະບັບ ເພື່ອສຳເນົາ;
8. ພາສີປະຈຳແຂວງຫຼວງນໍ້າທາ — 1 ສະບັບ ເພື່ອປະຕິບັດ;
9. ດ່ານພາສີສາກົນ ບໍ່ເຕັນ — 1 ສະບັບ ເພື່ອປະຕິບັດ;
10. ທະນາຄານການຄ້າຕ່າງປະເທດລາວມະຫາຊົນ — 1 ສະບັບ ເພື່ອປະຕິບັດ;
11. ທະນາຄານພັດທະນາລາວ — 1 ສະບັບ ເພື່ອປະຕິບັດ;
12. ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ — 1 ສະບັບ ເພື່ອປະຕິບັດ.


**ຜູ້ປະສານງານຢູ່ບໍ່ເຕັນ**

ທ່ານ ກໍ່ ວ່າງ 020 54 891 405

ທ່ານ ວິນນະວັດ ສອນທະວົງ 020 91 818 254

ທ່ານ ເຢຍລີ້ 020 76 926 132

**ຜູ້ປະສານງານຢູ່ນະຄອນຫຼວງ**

ທ່ານ ນາງ ອິນທະສອນ ໄຊຍະນາສີ 020 2814 5652

ທ່ານ ນາງ ເພັດດາວັນ ແກ້ວພະຈັນ 020 28 035 751


CamScanner